ກະຊວງສຶກສາທິການ ແລະ ກິລາ
ກົມສ້າງຄູ
ວິທະຍາໄລຄູ ສະຫວັນນະເຂດ

# ການນຳໃຊ້ວິດີໂອເພື່ອພັດທະນາທັກສະການວິເຄາະການສອນ

# ໃນວິຊາວິທີສອນຄະນິດສາດຂອງນັກສຶກສາ ຫ້ອງ2ກ ປະຖົມ ລະບົບ 9+3

---

ຄະນະວິໄຈຫ້ອງການສົ່ງເສີມວິຊາການ

ອາຈານ ໄພລັດ ສີທອງ

ອາຈານ ຄຳຫຼ້າ ແສງລັດສະໝີ

ມິຖຸນາ 2013

# ຫົວຂໍ້: ການນຳໃຊ້ວິດີໂອເພື່ອພັດທະນາທັກສະການວິເຄາະການສອນໃນວິຊາວິທີສອນ ຄະນິດສາດ ຂອງນັກສຶກສາ ຫ້ອງ2ກ ປະຖົມ ລະບົບ 9+3

**ຄະນະຜູ້ວິໃຈ**

ອາຈານ ໄພລັດ ສີທອງ

ອາຈານ ຄຳຫຼ້າ ແສງລັດສະໝີ

# ຄຳນຳ

ການວິໄຈຄັ້ງນີ້ແມ່ນການວິໃຈພາກປະຕິບັດໃນຫ້ອງຮຽນ, ຈຸດປະສົງເພື່ອພັດທະນາຂີດຄວາມສາມາດຂອງນັກສຶກາສາຄູໃນການວິເຄາະການສອນໂດຍສັງເກດຄືນຈາດວິດີໂອການສອນ, ເພື່ອພັດທະນາທັກສະການສອນ, ການວິເຄາະການສອນ ແລະ ການຖອດຖອນບົດຮຽນຂອງນັກສຶກສາຄູໃນຂະບວນການເຝິກສອນວິຊາຄະນິດສາດ, ອີກປະການໜຶ່ງກໍເພື່ອຄົ້ນຫາວິທີທາງທີ່ເໝາະສົມ ເພື່ອພັດທະນາການເຝິກສອນຂອງນັກສຶກສາຄູໃຫ້ໄດ້ປະສິດຕິພາບ, ການວິໄຈພາກປະຕິບັດຄັ້ງນີ້ຈະເປັນບາດກ້າວທຳອິດທີ່ກະຕຸກໃຫ້ຄູ-ອາຈານພາຍໃນວິທະ ຍາໄລຄູສະຫວັນນະເຂດຕ້ອງທົບທວນຄືການສອນຂອງຕົນເອງ, ວ່າສິ່ງທີ່ຕົນເອງສອນໄປສອດຄ່ອງແລ້ວບໍ່, ຄວນມີການປັບປຸງໃນຈຸດໃດ? ຄຳຖາມດັ່ງກ່າວຈະຊ່ວຍໃຫ້ຄູ-ອາຈານຫັນມາເຮັດການວິໄຈການຮຽນ-ການສອນພາຍໃນຫ້ອງຮຽນຂອງຕົນເອງ, ຈະເປັນການພັດທະນາການຮຽນ-ການສອນໃຫ້ດີຂຶ້ນເທື່ອລະກ້າວ, ເຮັດໃຫ້ຄູພາຍໃນວິທະຍາໄລຄູມີຜົນງານດ້ານວິຊາການເພື່ອຢັ້ງຢືນເອົາວິທະຍາຖານະ.

ການນຳໃຊ້ວິດີໂອໃນການສຶກສາບໍ່ແມ່ນແນວຄວາມຄິດໃໝ່, ມາຮອດປັດຈຸບັນ, ວິດີໂອຖືກນຳໃຊ້ເຂົ້າໃນການສຶກສາທີ່ຫຼາກຫຼາຍ, ອີກປະການໜຶ່ງ, ເຄື່ອງມືເທັກໂນໂລຢີໄດ້ເຂົ້າມາມີບົດບາດຫຼາຍໃນຊີວິດປະຈຳວັນຂອງພວກເຮົາ, ເຄື່ອງຖ່າຍວິດີໂອກໍ່ມີລາຄາຖືກລົງ ແລະ ຫຼາຍຄົນສາມາດນຳໃຊ້ໄດ້, ດັ່ງນັ້ນການນຳໃຊ້ວິດີໂອພັດທະນາການຮຽນ-ການສອນຈຶ່ງເປັນທາງເລືອກໜຶ່ງທີ່ຈະຊ່ວຍພັດທະນາຄຸນນະພາບການສ້າງຄູ, ເຮັດໃຫ້ຄູພາຍໃນວິທະຍາໄລຄູສາມາດນຳໃຊ້ເຕັກໂນໂລຢີສະໄໝໃໝ່ເຂົ້າການຮຽນ-ການສອນ, ເພື່ອພັດທະນາຄຸນນະພາບໃຫ້ໃກ້ຄຽງກັບສາກົນ, ເພື່ອກຽມຄວາມພ້ອມໃຫ້ຄູລາວສາມາດເສື່ອມໂຍງກັບພາກພື້ນເມື່ອປະເທດລາວເຂົ້າເປັນປະຊາຄົມອາຊຽນ.

ການວິໄຈຄັ້ງນີ້ເປັນຊ່ອງທາງທີ່ບອກໃຫ້ເຫັນວ່າ: ພາຍໃນວິທະຍາໄລຄູສາມາດນຳໃຊ້ວິດີໂອເຂົ້າໃນການພັດທະນາການເຝິກສອນຂອງນັກສຶກສາຄູ, ເພາະວ່າຫຼາຍຫ້ອງການກໍມີກ້ອງຖ່າຍວິດີໂອແລ້ວ, ດັ່ງນັ້ນພວກເຮົາຄວນນຳໃຊ້ໃຫ້ເກີດຜົນປະໂຫຍດຕໍ່ການຮຽນ-ການສອນໃຫ້ຫຼາຍທີ່ສຸດເທົ່າທີ່ຈະເຮັດໄດ້, ນອກຈາກນັ້ນຍັງຊີ້ໃຫ້ເຫັນວ່າ: ການນຳໃຊ້ວິດີບັນທຶກການເຝິກສອນສາມາດເກັບກຳຂໍ້ມູນທີ່ສຳຄັນເພື່ອໃຊ້ໃນການວິເຄາະການສອນ, ວິດີໂອສາມາດເກັບກຳທຸກເຫດການຕົວຈິງທີ່ເກີດຂຶ້ນໃນຫ້ອງຮຽນ, ດັ່ງນັ້ນພາບເຫດການທີ່ເກີດຂຶ້ນໃນຫ້ອງຮຽນທີ່ໄດ້ຈາກວິດີໂອຈຶ່ງມີປະໂຫຍດຫຼາຍຕໍ່ການສະທ້ອນການສອນ, ນອກຈາກນັ້ນ ການວິເຄາະການສອນມີຜົນປະໂຫຍດຫຼາຍ, ເພາະວ່າເປັນການທົບທວນຄືນສິ່ງທີ່ໄດ້ປະຕິບັດໃນຫ້ອງຮຽນແລ້ວຊອກຫາຈຸດທີ່ຄວນປັບປຸງ, ວິທີການດັ່ງກ່າວຊ່ວຍໃຫ້ນັກສຶກສາຄູພັດທະນາທັກສະການວິເຄາະ ແລະ ໄຈ້ແຍກບັນຫາ, ເຝິກໃຫ້ເຂົາເຈົ້າໄດ້ຮຽນຮູ້ການເຮັດວຽກເປັນທີມງານ ເຊິ່ງຈະເປັນຜົນປະໂຫຍດຕໍ່ການເຝິກສອນຂອງເຂົາເຈົ້າຫຼາຍທີ່ສຸດ.

# ສາລະບານ

ເນື້ອໃນ ໜ້າ

ຄຳນຳ.......................................................................................ກ

ສາລະບານ..................................................................................ຂ

1. ພາກສະເໜີ ........................................................................ 1

1.1 ຈຸດປະສົງ ........................................................................2

1.2 ຂອບເຂດການວິໄຈ ...............................................................2

2. ທິດສະດີການສອນ ແລະ ຫຼັກການທີ່ນຳໃຊ້ ........................................3

2.1 ການນຳໃຊ້ວີດີໂອໃນການສຶກສາ...................................................3

3. ວິທີຈັດຕັ້ງ ແລະ ປະຕິບັດ ..........................................................4

3.1 ເປົ້າໝາຍຜູ້ເຂົ້າຮ່ວມ ...............................................................5

3.2 ເຄື່ອງມືທີ່ໃຊ້ໃນການວິໄຈ ..........................................................5

3.2.1 ຮ່າງປະເມີນການສອນ ...........................................................5

3.2.2 ແບບສຳພາດ ......................................................................6

3.2.3 ບົດສະທ້ອນການສອນ ..........................................................6

4. ຂະບວນການລວບລວມຂໍ້ມູນ .......................................................6

5. ຂະບວນການວິເຄາະຂໍ້ມູນ ...........................................................7

5.1 ການປຽບທຽບການປະເມີນການເຝິກສອນ ໃນຂັ້ນ ປ2 ............................7

5.1.1 ຜົນການປະເມີນປຽບທຽບຕາມຜູ້ປະເມີນ.........................................7

5.1.2 ຜົນການປະເມີນປຽບທຽບຕາມຄັ້ງທີຂອງການສອນ ...............................8

5.2 ການປຽບທຽບການປະເມີນການເຝິກສອນ ໃນຂັ້ນ ປ3 ........................... 10

5.2.1 ຜົນການປະເມີນປຽບທຽບຕາມຜູ້ປະເມີນ........................................ 10

5.2.2 ຜົນການປະເມີນປຽບທຽບຕາມຄັ້ງທີຂອງການເຝິກສອນ ......................... 11

5.3 ຂໍ້ມູນໄດ້ຈາກພາກສ່ວນທີສອງຂອງຮ່າງປະເມີນການສອນ ແລະ ບົດສະທ້ອນການສອນ .................. 13

5.4 ຂໍ້ມູນຈາກການສຳພາດ.............................................................. 16

6. ອະທິບາຍຜົນ...................................................................... 17

7. ຂໍ້ສະເໜີ ແລະ ຄຳແນະນຳສຳລັບການດຳເນີການວິໄຈຄັ້ງຕໍ່ໄປ ........................ 19

8. Reference ..........................................................................20

9. ພາກພະໜວກ............................................................... ...... 21